**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ ເລກທີ 1581/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 29 ຕຸລາ 2025

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບຂຶ້ນລາຄານ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດວ່າດ້ວຍ ກອງທຶນນ້ຳມັນເຊື້ອໄຟສະບັບເລກທີ 83/ລບ, ລົງວັນທີ 16 ມັງກອນ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມການຄ້າພາຍໃນ ສະບັບເລກທີ 1999/ອຄ,ລົງວັນທີ 09 ກັນຍາ 2025;
- ອີງຕາມ ທິດຊີ້ນຳຂອງຄະນະນຳ ກະຊວງ ອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 29 ຕຸລາ 2025;
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟທຸກຊະນິດ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ປັບຂຶ້ນລາຄານ້ຳມັນເຊື້ອໄຟ ຄື: ນ້ຳມັນແອັດຊັງພິເສດ ປັບຂຶ້ນ 990 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບຂຶ້ນ 560 ກີບ/ລິດ ແລະ ນ້ຳມັນກາຊວນ ປັບຂຶ້ນ 680 ກີບ/ລິດ.
   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງ:

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 27,790 | 28,780 | +990 | 3.56 | |
| 2 | ອຊ ທຳມະດາ | 23,140 | 23,700 | +560 | 2.42 | |
| 3 | ກາຊວນ | 18,940 | 19,620 | +680 | 3.59 | |

(ສຳລັບລາຄາຂາຍຍ່ອຍເຂດເທດສະບານແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດ ວັນທີ 30 ຕຸລາ 2025, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.

3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ສະບັບເລກທີ 1580/ກຄພນ, ລົງວັນທີ 29 ຕຸລາ 2025 ຈົນກວ່າຈະມີການປ່ຽນແປງ.

4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.

5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ,ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 1542/ກຄພນ, ລົງວັນທີ 22 ຕຸລາ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າກົມ**

ສັນຕິສຸກ ພູນສະຫວັດ

<u>ບ່ອນສົ່ງ:</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 30 ຕຸລາ 2025, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **28,780** | **23,700** | **19,620** |
| 2 | ແຂວງຜົ້ງສາລີ | **29,770** | **24,690** | **20,610** |
| 3 | ແຂວງຫຼວງນ້ຳທາ | **29,270** | **24,200** | **20,110** |
| 4 | ແຂວງອຸດົມໄຊ | **29,450** | **24,370** | **20,290** |
| 5 | ແຂວງບໍ່ແກ້ວ | **28,880** | **23,800** | **19,720** |
| 6 | ແຂວງຫຼວງພະບາງ | **29,290** | **24,210** | **20,130** |
| 7 | ແຂວງໄຊຍະບູລີ | **29,100** | **24,030** | **19,950** |
| 8 | ແຂວງຫົວພັນ | **29,280** | **24,210** | **20,130** |
| 9 | ແຂວງຊຽງຂວາງ | **28,970** | **23,890** | **19,810** |
| 10 | ແຂວງວຽງຈັນ | **28,780** | **23,700** | **19,620** |
| 11 | ແຂວງບໍລິຄຳໄຊ | **28,830** | **23,750** | **19,670** |
| 12 | ແຂວງຄຳມ່ວນ | **28,810** | **23,730** | **19,650** |
| 13 | ແຂວງສະຫວັນນະເຂດ | **28,810** | **23,730** | **19,650** |
| 14 | ແຂວງສາລະວັນ | **29,060** | **23,990** | **19,910** |
| 15 | ແຂວງຈຳປາສັກ | **28,840** | **23,760** | **19,680** |
| 16 | ແຂວງເຊກອງ | **29,060** | **23,980** | **19,910** |
| 17 | ແຂວງອັດຕະປື | **29,110** | **24,030** | **19,950** |
| 18 | ແຂວງໄຊສົມບູນ | **29,200** | **24,120** | **20,050** |

ນະຄອນຫຼວງວຽງຈັນ, ວັນທີ 29 ຕຸລາ 2025